# ພິທີຖະແຫລງຂ່າວ BCEL OneHeart

## ໂຄງການ: "ລະດົມທຶນຊ່ວຍເຫຼືອຜູ້ປະສົບໄພພິບັດນ້ຳຖ້ວມ ທີ່ ເມືອງ ສະໜາມໄຊ, ແຂວງອັດຕະປື"

ໃນວັນພະຫັດ ວັນທີ 26 ກໍລະກົດ 2018 ເວລາ 13:30 ນາທີ ທີ່ສຳນັກງານໃຫຍ່ ທຄຕລ ໄດ້ຈັດພິທີຖະແຫລງຂ່າວການລະດົມທຶນຜ່ານ OneHeart ຊ່ວຍເຫຼືອຜູ້ປະສົບໄພພິບັດນ້ຳຖ້ວມ ທີ່ ແຂວງ ອັດຕະປື. ໃຫ້ກຽດຂຶ້ນຖະແຫລງຂ່າວໃນຄັ້ງນີ້ໂດຍ ທ່ານ ປອ ບຸນເຫຼືອ ສິນໄຊວໍລະວົງ ຫົວໜ້າກົມນະໂຍບາຍການເງິນ ແລະ ນິຕິກຳກະຊວງການເງິນ ທັງເປັນປະທານສະພາບໍລິຫານ ທຄຕລ ພ້ອມດ້ວຍ ທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ, ພາຍໃຕ້ການເຂົ້າຮ່ວມຂອງ ທ່ານຮອງປະທານ, ບັນດາກຳມະການສະພາບໍລິຫານ ທຄຕລ, ຄະນະອຳນວຍການ, ພະນັກງານ ທຄຕລ ແລະ ສື່ມວນຊົນຈາກຫຼາຍພາກສ່ວນກໍ່ໄດ້ເຂົ້າຮ່ວມຢ່າງພ້ອມພຽງ.




ທ່ານປະທານແຈ້ງໃຫ້ຊາບວ່າຄະນະຜູ້ບໍລິຫານຂອງ ທຄຕລ ໄດ້ເປີດໂຄງການລະດົມທຶນຊ່ວຍເຫຼືອຜູ້ປະສົບໄພນ້ຳຖ້ວມທີ່ ແຂວງ ອັດຕະປື ຜ່ານທາງ BCEL OneHeart ໃນຕອນເຊົ້າຂອງວັນທີ 24 ກໍລະກົດ 2018 ເຊິ່ງເປັນຊ່ອງທາງອັນທັນສະໄໝສຳລັບລູກຄ້າ ທຄຕລ ທີ່ນຳໃຊ້ BCEL One ສາມາດຮ່ວມບໍລິຈາກຊ່ວຍເຫຼືອຜູ້ປະສົບໄພໃນເທື່ອນີ້. ເບື້ອງຕົ້ນໄດ້ມີການກຳນົດເປົ້າໝາຍເງິນບໍລິຈາກ ໄວ້ທີ່ 30 ລ້ານກີບ. ແຕ່ເປົ້າໝາຍທີ່ວາງໄວ້ແມ່ນເກີນຄາດ, ຕົວເລກຜູ້ຮ່ວມບໍລິຈາກ ແລະ ວົງເງິນທີ່ລະດົມ ໄດ້ເພີ່ມຂຶ້ນຢ່າງໄວວາ, ເຮັດໃຫ້ ທຄຕລ ຕ້ອງໄດ້ຂະຫຍາຍວົງເງິນເປົ້າໝາຍອອກໄປເປັນ, 50 ລ້ານ, 200 ລ້ານ, 500 ລ້ານ ແລະ 1.000 ລ້ານ ພາຍໃນມື້ດຽວກັນ. ໃນໄລຍະເວລາເກືອບ 3 ວັນ ວົງເງິນທີ່ລະດົມໄດ້ແມ່ນເກືອບ **3.000 ລ້ານກີບ** ເງິນດັ່ງກ່າວແມ່ນເງິນຂອງສັງຄົມທີ່ໄດ້ຮ່ວມກັນບໍລິຈາກຫຼາຍກວ່າ **23.000 ຄົນ** ທັງພາຍໃນ ແລະ ຕ່າງປະເທດ (ຕົວເລກມື້ຖະແຫລງຂ່າວ ເວລາ 13:35 ນາທີ) ແລະ ຈະມີການສືບຕໍ່ຮັບບໍລິຈາກໄປຈົນກວ່າສະພາບເຫດການຈະເປັນປົກກະຕິ.

ນອກຈາກລູກຄ້າ ແລະ ປະຊາຊົນພາຍໃນປະເທດແລ້ວ ທຄຕລ ຍັງໄດ້ພັດທະນາຊ່ອງທາງການລະດົມທຶນຈາກຜູ້ທີ່ຢູ່ຕ່າງປະເທດໃຫ້ສາມາດຮ່ວມບໍລິຈາກຊ່ວຍເຫຼືອໄດ້ໂດຍຜ່ານບັດສາກົນ ເຊັ່ນ: VISA, Master Card, UnionPay ແລະ JCB ຜ່ານເວັບໄຊທ໌ www.oneheart.la ໂດຍ ທຄຕລ ຈະຮັບຜິດຊອບຄ່າທຳນຽມ 2,5% ທີ່ສູນບັດສາກົນເກັບຈາກຜູ້ຖືບັດ.

ນອກຈາກບໍລິຈາກຜ່ານທາງ BCEL OneHeart ທຄຕລ ກໍ່ຍັງໄດ້ເປີດບັນຊີພິເສດເພື່ອໃຫ້ຜູ້ທີ່ບໍ່ທັນນຳໃຊ້ BCEL One ສາມາດປະກອບສ່ວນເປັນເງິນສົດຢູ່ຄາວເຕີບໍລິການ ຫຼື ໂອນເງິນເຂົ້າບັນຊີພິເສດໝາຍເລກ 080 12 000 1172646 001 ຊື່ບັນຊີ: BCEL ATP Social Fund.




ຄຽງຄູ່ກັບການລະດົມທຶນຜ່ານ BCEL OneHeart, ທຄຕລ ກໍ່ໄດ້ສົມທົບເງິນບໍລິຈາກຜ່ານ ທະນາຄານແຫ່ງ ສປປ ລາວ ເພື່ອຊ່ວຍເຫຼືອໃນເບື້ອງຕົ້ນ 30 ລ້ານກີບ ແລະ ໃນປະຈຸບັນ ທຄຕລ ກໍ່ພວມລະດົມທຶນຈາກພະນັກງານຕື່ມອີກ. ພ້ອມດຽວກັນນັ້ນ, ກໍ່ໄດ້ມອບເງິນທີ່ OneHeart ໄດ້ຮັບລາງວັນຊະນະເລີດ ຈາກການແຂ່ງຂັນລະດັບຊາດ Lao ICT Award 2018 ຈຳນວນ 8 ລ້ານກີບ ໃຫ້ແກ່ຜູ້ປະສົບໄພນໍ້າຖ້ວມ ທີ່ ແຂວງ ອັດຕະປື ຄັ້ງນີ້ອີກດ້ວຍ.

ການລະດົມທຶນໄດ້ໃນຈຳນວນມະຫາສານພາຍໃນໄລຍະເວລາສັ້ນໆໃນເທື່ອນີ້ ເປັນການຢັ້ງຢືນໃຫ້ເຫັນເຖິງການຮັກສາມູນເຊື້ອແຫ່ງຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນ ແລະ ກັນຂອງປະຊາຊົນລາວບັນດາເຜົ່າໄດ້ຢ່າງຫຼວງຫຼາຍ. ດ້ວຍເຫດນີ້ຈຶ່ງຢັ້ງຢືນໃຫ້ເຫັນວ່າ ສັງຄົມລາວເຮົາ ເປັນສັງຄົມແຫ່ງຄວາມຫ່ວງໃຍ ແລະ ເອື້ອເຟື້ອເພື່ອແຜ່ເຊິ່ງກັນ ແລະ ກັນຢ່າງແທ້ຈິງ. ໂດຍຜູ້ຮ່ວມບໍລິຈາກສາມາດຕິດຕາມກ່ຽວກັບການຄຸ້ມຄອງ, ເປົ້າໝາຍການນຳໃຊ້ ແລະ ຄວາມໂປ່ງໃສຂອງການລະດົມທຶນ. ເງິນທີ່ລະດົມໄດ້ນີ້ ທຄຕລ ຈະນຳໄປຊ່ວຍເຫລືອຜູ້ປະສົບໄພພິບັດ ຕາມຈຸດປະສົງຂອງການລະດົມທຶນ ແລະ ຄວາມມຸ່ງມາດປາດຖະໜາຂອງຜູ້ຮ່ວມບໍລິຈາກ ໃນວັນທີ 26 ກໍລະກົດ 2018 ຜ່ານມານີ້ ຄະນະນຳຂອງ ທຄຕລ ນຳພາໂດຍ ທ່ານ ຄຳຊຽນ ມິ່ງບຸບຜາ ຮອງຜູ້ອຳນວຍການໃຫຍ່ ພ້ອມດ້ວຍຕົວແທນສາມອົງການຈັດຕັ້ງມະຫາຊົນ ທຄຕລ ກໍ່ໄດ້ ສະແດງເຈດຈຳນົງເພື່ອຈະມອບເງິນທີ່ລະດົມໄດ້ຈາກສັງຄົມ ຜ່ານ BCEL OneHeart ຈຳນວນ **2.000 ລ້ານກີບ** (ຄັ້ງທີ 1) ໂດຍກຳນົດເປັນວົງເງິນໄວ້, ສ່ວນການນຳໃຊ້ເງິນຕົວຈິງ, ຄະນະກຳມະການຂອງ ທຄຕລ ຈະໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ແລະ ປະຊາຊົນຜູ້ປະສົບໄພພິບັດ ເພື່ອນຳໃຊ້ທຶນດັ່ງກ່າວຈັດຫາສິ່ງຈຳເປັນໃຫ້ແກ່ຜູ້ປະສົບໄພ ເພື່ອຮັບປະກັນການຊ່ວຍເຫຼືອຖືກຕ້ອງຕາມຄວາມຕ້ອງການ ແລະ ໄປເຖິງຜູ້ປະສົບໄພຢ່າງແທ້ຈິງ. ໃນຂັ້ນຕອນການມອບຮັບເຄື່ອງຂອງບໍລະຈາກແຕ່ລະຄັ້ງ ທຄຕລ ຈະເຊີນຜູ້ບໍລິຈາກໄດ້ມີສ່ວນເຂົ້າຮ່ວມນຳ.

ສຳລັບເງິນທີ່ເຫຼືອແມ່ນຈະໄດ້ດຳເນີນການຕາມຂັ້ນຕອນ ແລະ ລະບຽບການ ເພື່ອໃຫ້ຜູ້ປະສົບໄພໄດ້ຮັບຄວາມຊ່ວຍເຫຼືອຢ່າງແທ້ຈິງ ແລະ ຈະແຈ້ງໃຫ້ສັງຄົມຊາບແຕ່ລະໄລຍະ.

ໂອກາດນີ້ຂໍຮຽນຕາງໜ້າຜູ້ປະສົບໄພ ສະແດງຄວາມຂອບໃຈມາຍັງທຸກທ່ານທີ່ໄດ້ຮ່ວມບໍລິຈາກຊ່ວຍຜູ້ປະສົບໄພພິບັດນໍ້າຖ້ວມ ທີ່ ແຂວງ ອັດຕະປື ຜ່ານ BCEL OneHeart ຂໍອວຍພອນໃຫ້ທ່ານ ຈົ່ງມີຄວາມສຸກຄວາມຈະເລີນກ້າວໜ້າດ້ວຍ.

ທ່ານກໍ່ສາມາດມີສ່ວນຮ່ວມແບ່ງປັນນໍ້າໃຈຊ່ວຍເຫຼືອສັງຄົມ ຜ່ານ BCEL OneHeart ດ້ວຍຕົວທ່ານເອງໄດ້. BCEL OneHeart ຫົວໃຈດວງດຽວກັນ (ສະດວກວ່ອງໄວໂປ່ງໃສ) ຂໍ້ມູນເພີ່ມເຕີມ: Website: www.oneheart.la





